ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1042/ຫອຄ
ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2025

**ຮຽນ**: ທ່ານຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
**ເລື່ອງ**: ໃຫ້ຢຸດຕິຊົ່ວຄາວ ການອອກອະນຸຍາດດຳເນີນທຸລະກິດກິດຈະການຈຳໜ່າຍພາຫານະ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 221/ຫສນຍ, ລົງວັນທີ 11 ກຸມພາ 2025;
- ອີງຕາມ ຄຳແນະນຳ ສະບັບເລກທີ 0612/ຫອຄ, ລົງວັນທີ 21 ມີນາ 2025 ວ່າດ້ວຍ ການຜັນຂະຫຍາຍ ແຈ້ງການ ເລກທີ 0211/ຫສນຍ, ລົງວັນທີ 11 ກຸມພາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2072/ອຄ,ລົງ ວັນທີ 15 ພະຈິກ 2023;
- ອີງຕາມ ໜັງສືສະເໜີ ສະບັບເລກທີ 1734/ກຄຕ,ລົງວັນທີ 14 ພຶດສະພາ 2025.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບວ່າ: ໂດຍອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 221/ຫສນຍ, ລົງວັນທີ 11 ກຸມພາ 2025 ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງພາຫານະໃຫ້ເຂົ້າສູ່ລະບົບ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ຈຶ່ງແຈ້ງມາຍັງທ່ານປະຕິບັດດັ່ງນີ້:

1. ໃຫ້ຢຸດຕິຊົ່ວຄາວ ການອອກອະນຸຍາດດຳເນີນທຸລະກິດ ກິດຈະການຈຳໜ່າຍພາຫານະ ຕາມຄຳແນະນຳສະບັບເລກທີ 0612/ຫອຄ, ລົງວັນທີ 21 ມີນາ 2025;
2. ການປ່ຽນແປງເນື້ອໃນ ຫຼື ໃບອະນຸຍາດ ດຳເນີນກິດຈະການ ການຈຳໜ່າຍພາຫານະແມ່ນໃຫ້ລໍຖ້າຄະນະຮັບຜິດຊອບໃນການລົງກວດກາຄືນບັນດາບໍລິສັດນຳເຂົ້າ,ຈຳໜ່າຍພາຫານະ ຈົນກວ່າຈະສຳເລັດເພື່ອຄວາມຖືກຕ້ອງ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ;
3. ສະຫຼຸບລາຍງານ ບັນດາບໍລິສັດ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດການຈຳໜ່າຍພາຫານະ ພາຍໃນແຂວງ, ນະຄອນຫຼວງ ສົ່ງໃຫ້ ກົມການຄ້າພາຍໃນບໍ່ໃຫ້ກາຍວັນທີ 27 ມິຖຸນາ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດ.

ຫົວໜ້າຫ້ອງການ

ຫ້ອງການ

ປອ. ບົວວັນ ວິລະວົງ